ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 214013-14, ແຟັກ: 213495

ເລກທີ 5273 /ກອຢ
ນະຄອນຫຼວງວຽງຈັນ, ວັນທີ 27 APR 2022

## ໜັງສືແຈ້ງການ

**ເຖິງ:** ທ່ານຫົວໜ້າພະແນກສາທາລະນະສຸກແຂວງ, ນະຄອນຫຼວງ, ບໍລິສັດ, ຫ້າງຮ້ານ ແລະ ປະຊາຊົນໃນທົ່ວປະເທດ.

**ເລື່ອງ:** ຫ້າມບໍລິໂພກ ແລະ ຈໍາໜ່າຍ ຜະລິດຕະພັນອາຫານ ສາຫຼ່າຍທະເລປຸງລົດ ລົດດັ້ງເດີມ ແລະ ສາຫຼ່າຍທະເລແຫ້ງປຸງລົດ ລົດເຜັດ (ກາໜີແພນດ້າ).

- ອີງຕາມ ກົດໝາຍວ່າດ້ວຍອາຫານ, ສະບັບເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013.
- ອີງຕາມ ໜັງສືແຈ້ງການ ຂອງ ສໍານັກງານຄະນະກໍາມະການອາຫານ ແລະ ຢາ ແຫ່ງລາຊະອານາຈັກໄທ, ສະບັບລົງວັນທີ 19 ເມສາ 2022.

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ຜະລິດຕະພັນອາຫານ ສາຫຼ່າຍທະເລປຸງລົດ ລົດດັ້ງເດີມ (ກາໜີແພນດ້າ) ເລກ ອ.ຢ 10-1-04153-1-0054 ວັນທີຜະລິດ 29/11/2021 ວັນໝົດອາຍຸ 29/11/2022 ແລະ ສາຫຼ່າຍທະເລແຫ້ງປຸງລົດ ລົດເຜັດ (ກາໜີແພນດ້າ) ເລກ ອ.ຢ 10-1-04153-1-0055 ວັນທີຜະລິດ 18/11/2021 ວັນໝົດອາຍຸ 18/11/2022, ໄດ້ກວດພົບວ່າຜະລິດຕະພັນດັ່ງກ່າວມີການປົນເປື້ອນ ເຊື້ອຈຸລິນຊີ Bacillus cereus ເກີນມາດຕະຖານກໍານົດ ຊຶ່ງສາມາດເຮັດໃຫ້ເກີດພະຍາດຖອກທ້ອງ, ອາຫານເປັນພິດ ແລະ ມີຄວາມອັນຕະລາຍຕໍ່ສຸຂະພາບ.

ກົມອາຫານ ແລະ ຢາ ຈຶ່ງແຈ້ງມາຍັງທ່ານ ຫ້າມບໍລິໂພກ, ຈໍາໜ່າຍ ແລະ ນໍາເຂົ້າ ຜະລິດຕະພັນດັ່ງກ່າວຕາມທີ່ໄດ້ກ່າວໄວ້ຂ້າງເທິງນີ້, ຖ້າຫາກເຈົ້າໜ້າທີ່ອາຫານ ແລະ ຢາພົບເຫັນ ແມ່ນໃຫ້ໄດ້ອາຍັດ, ຍຶດ, ທໍາລາຍ ແລະ ປະຕິບັດມາດຕະການ ຕາມລະບຽບການທີ່ໄດ້ກໍານົດໃນລະບຽບກົດໝາຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ໃຫ້ຄວາມຮ່ວມມືຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

ຫົວໜ້າກົມ

ກະຊວງສາທາລະນະສຸກ ກົມອາຫານ ແລະ ຢາ

ປອ. ດຣ. ບຸນຊູ ແກ້ວທາວົງ